# ບົດທີ 21

# ຕົວຢ່າງຂອງອານາຈັກ ພາກປາຍ

| | |
|---|---|
| **ອຸປະມາເລື່ອງ...** | **ມທ 13:...** |
| ຜູ້ຫວ່ານ | ຂໍ້ 1-9 |
| ອະທິບາຍເລື່ອງຜູ້ຫວ່ານ | ຂໍ້ 10-23 |




| | |
|---|---|
| ເລື່ອງເຂົ້ານົກປົນເຂົ້າດີ | ຂໍ້ 24-30 |
| ເລື່ອງເມັດຜັກກາດ | ຂໍ້ 31-32 |
| ເລື່ອງເຊື້ອແປ້ງ | ຂໍ້ 33 |
| ອະທິບາຍເລື່ອງເຂົ້ານົກແລະເຂົ້າດີ | ຂໍ້ 34-43 |




| | |
|---|---|
| ເລື່ອງຊັບທີ່ເຊື່ອງໄວ້ | ຂໍ້ 44 |
| ເລື່ອງໄຂ່ມຸກທີ່ມີຄ່າແພງ | ຂໍ້ 45-46 |
| ເລື່ອງມອງ | ຂໍ້ 47-50 |
| ເລື່ອງຂອງໃໝ່ແລະຂອງເກົ່າ | ຂໍ້ 51-52 |



**1** ຄຳອຸປະມາ ທັງ 8 ເລື່ອງໃນ ມັດທາຍ ບົດ 13 ສອນກ່ຽວກັບການແຜ່ຂະຫຍາຍໄປຂອງອານາຈັກ. ຍົກຕົວຢ່າງ: ຄຳອຸປະມາທີສອງ ສອນເລື່ອງຄົນທີ່ເປັນຄຣິດສະຕຽນແລະຄົນທີ່ຄ້າຍຄືກັບຄຣິດສະຕຽນ ແຕ່ບໍ່ແມ່ນ.

ກ. ຄຳອຸປະມາທີ່ຕໍ່ຫຼັງຈາກ ພະເຢຊູ ອະທິບາຍເລື່ອງຜູ້ຫວ່ານເປັນຄຳອຸປະມາເລື່ອງຫຍັງ? _

ຂ. ໃນ ມທ ບົດ 13 ຂໍ້ໃດ ເຖິງຂໍ້ໃດ? ________________________________

## ເລື່ອງເຂົ້ານົກແລະເຂົ້າດີ

**2** ໃຫ້ທ່ານອ່ານ ມທ 13:24-30 ກ່ອນຈະວິເຄາະຄຳອຸປະມານີ້ ໃຫ້ເຮົາອ່ານເລື່ອງ ພະເຢຊູ ຊົງອະທິບາຍກ່ອນ. ໃນ ມທ 13:36-43 ໃຫ້ທ່ານຂຽນຄວາມໝາຍໃນແຕ່ລະສ່ວນ (ຈາກຄຳອະທິບາຍຂອງ ພະເຢຊູ)

ກ. ຜູ້ຫວ່ານເມັດດີໄດ້ແກ່ ________________________________

ຂ. ນາ ________________________________

ຄ. ເມັດດີ ________________________________

ງ. ເຂົ້ານົກ ________________________________

ຈ. ສັດຕູທີ່ຫວ່ານເຂົ້ານົກ ________________________________

ສ. ລະດູກ່ຽວ ________________________________

ຊ. ຜູ້ຈະມາເກັບກ່ຽວ ________________________________

**3** ຄຳອຸປະມາສອງປະການແລກໃນ ມັດທາຍ ບົດ 13 ອ້າງເຖິງການປູກຝັງເວົ້າເຖິງການຫວ່ານພືດໃນທົ່ງນາ. ແຕ່ເປັນ ຢ່າງໃດກໍ່ຕາມ ຄຳອຸປະມາທັງສອງສອນໄປກ່ຽວກັບອານາຈັກສະຫວັນຄືກັນ ແຕ່ສອນຄົນລະເລື່ອງ. ຕໍ່ໄປທ່ານຈະເຫັນວ່າມີອັນແຕກຕ່າງກັນໄປຢ່າງໃດ? ໃຫ້ທ່ານຕອບຄຳຖາມຕໍ່ໄປນີ້:

ກ. ໃນຄຳອຸປະມາເລື່ອງຜູ້ຫວ່ານ ເມັດເຂົ້າປຽບເໝືອນຫຍັງ? ________________

ຂ. ໃນເລື່ອງເຂົ້ານົກແລະເຂົ້າດີ, ເຂົ້າດີປຽບທຽບຄືຫຍັງ? ________________

ຄ. ຜູ້ຫວ່ານເຂົ້າດີຄືບຸດໃດ? ________________________________

ງ. ບຸດມະນຸດໝາຍເຖິງໃຜ? ________________________________

ຈ. ເຂົ້ານົກປຽບທຽບກັບພົນລະເມືອງຂອງໃຜ? ________________________
ເຂົ້ານົກໝາຍເຖິງຜູ້ບໍ່ເຊື່ອ ເຂົ້າດີໝາຍເຖິງຜູ້ເຊື່ອ.

**4** ຕອນນັ້ນເຂົ້າບໍ່ສຸກເທື່ອ ເຂົ້ານົກກັບເຂົ້າດີຄ້າຍຄືກັນຈົນວ່າຈະແຍກມັນຍາກຫຼາຍ ຈະແຍກໄດ້ໃນເວລາໃດ? (ເລືອກ)

ກ. ແຍກບໍ່ໄດ້ຈັກເທື່ອ.

ຂ. ແຍກໄດ້ແຕ່ເວລາມັນງອກໃໝ່ໆ.

ຄ. ແຍກໄດ້ແຕ່ເວລາມັນສຸກພໍກ່ຽວ.

**5** ຖ້າວ່າຈະແຍກເຂົ້ານົກອອກຈາກເຂົ້າດີຈະແຍກໄດ້ໃນລະດູໃດ? ____________________

ເຂົ້ານົກ





ເຂົ້າດີ





**6** ກ. ເຂົ້ານົກປຽບທຽບກັບພົນລະເມືອງຂອງໃຜ? ____________________

ຂ. ເຂົ້າຊະນິດໃດປຽບທຽບກັບຄົນທີ່ບໍ່ເຊື່ອ? ____________________

ຄ. ໃຜຫວ່ານເຂົ້ານົກນັ້ນໄວ້? ____________________

ງ. ເຂົ້າດີໝາຍເຖິງຜູ້ທີ່ເຊື່ອ ຫຼື ບໍ່ເຊື່ອ? ____________________

ຈ. ເຂົ້າມີສ່ວນຢ່າງໃດໃນອານາຈັກສະຫວັນ? ____________________

ສ. ບຸດມະນຸດຄືໃຜ? ____________________

**7** ໃນ ມທ 13:28 ພວກຄົນໃຊ້ຢາກຈະໄປເຮັດຫຍັງ? ____________________

**8** ມີພວກຄົນຢິວຫຼາຍຄົນທັງ ໂຢຮັນບັບຕິສະໂຕ ແລະສາວົກຂອງ ພະເຢຊູ ດ້ວຍ ທີ່ຢາກໃຫ້ ພະເຢຊູ ຫຼົກເຂົ້ານົກນັ້ນໃຫ້ ອອກທັນທີ. ເຂົາຢາກໃຫ້ ພະເຢຊູ ຢຶດອຳນາດຢ່າງຮຸນແຮງແລະຕັ້ງອານາຈັກໄວ້ທັນທີ ເຂົາຢາກໃຫ້ພະອົງທຳລາຍ ໃຜ? (ເລືອກ)

ກ. ເຮໂລດຜູ້ປົກຄອງເມືອງ. ຂ. ຜູ້ຫວ່ານພືດ.

ຄ. ເຈົ້ານາຍຂອງຊາດໂລມ. ງ. ໂຢຮັນບັບຕິສະໂຕ.

ຈ. ເອລີຢາ.

**9** ໃນຄຳອຸປະມາເລື່ອງເຂົ້ານົກປົນເຂົ້າດີ ນາຍຕອບຄົນໃຊ້ນັ້ນວ່າຢ່າງໃດ? ____________________

____________________________________________

**10** ຫຼາຍເທື່ອຕໍ່ຫຼາຍທີ່ມີຄົນມາທົດລອງ ພະເຢຊູ ໃຫ້ຢຶດອຳນາດດ້ວຍການໃຊ້ຄວາມຮຸນແຮງ ແຕ່ພະອົງເຂົ້າໃຈດີກວ່າເຂົາ ວ່າຈະຕັ້ງອານາຈັກທີ່ປະກອບດ້ວຍຄວາມຮັກແລະຄວາມສະຫງົບຈະໃຊ້ດ້ວຍຄວາມຮຸນແຮງບໍ່ໄດ້. ພະເຢຊູ ຮູ້ຢູ່ແລ້ວວ່າ ຈະມີການຕັດສິນຢູ່ ການຕັດສິນນັ້ນກໍ່ແນ່ນອນດ້ວຍ ແຕ່ຈົ່ງລໍຖ້າວັນສຸດທ້າຍນັ້ນກ່ອນ ໃນມື້ນັ້ນ:

ກ. ເຂົ້ານົກຈະເປັນຢ່າງໃດ? ____________________

ຂ. ເຂົ້າດີເດ? ____________________

**11** ປາກົດວ່າແຜນການຂອງ ພະເຈົ້າ ແຈ້ງດີ

ກ. ໃນອະນາຄົດພວກເທວະດາຂອງ ພະເຈົ້າ ຈະມາເກັບກ່ຽວຜູ້ໃດໄວ້ເພື່ອຕັດສິນໃນມື້ສຸດທ້າຍນັ້ນ? ____________________

ຂ. ໃນປະຈຸບັນບໍ່ແມ່ນພາລະຂອງເຮົາທີ່ຈະແຍກເຂົ້ານົກແລະເຂົ້າດີເທື່ອ. ໃນວັນສຸດທ້າຍ ພະເຈົ້າ ຈະຕັດສິນພົນລະ ເມືອງຂອງໃຜ? ____________________

ຄ. ທຸກມື້ນີ້ພວກເຮົາບໍ່ມີສິດຈະຕັດສິນຜູ້ໃດເທື່ອ ທຸກຢ່າງຈະປາກົດແຈ້ງໃນວັນໃດ? _______

**12** ທີ່ມານມາທົດລອງ ພະເຢຊູ ໃຫ້ຕັ້ງອານາຈັກຂອງ ພະເຈົ້າ ໄວ້ດ້ວຍອຳນາດຮຸນແຮງ ການທົດລອງນັ້ນຢູ່ບ່ອນໃດ? ___________________________________________________

**13** ພວກເຮົາໃນສະໄໝນີ້ຕ້ອງລະວັງໂຕບໍ່ໃຊ້ສິດຮຸນແຮງດ້ວຍ ເຮົາເຮັດໃຫ້ອານາຈັກຂອງ ພະເຈົ້າ ຂະຫຍາຍໄປດ້ວຍອຳ ນາດບໍ່ໄດ້. ເຖິງເຮົາຈະບໍ່ບີບບັງຄັບຄົນຈັກເທື່ອ ແຕ່ຢ້ານວ່າເຮົາອາດຈະໃຊ້ຄວາມສະຫຼາດຂອງເຮົາຊັກຊວນເຂົາໃຫ້ມາເຊື່ອພະທຳ. ຊາຂາລີຢາ 4:6 ບອກວ່າ “ບໍ່ໃຊ້ດ້ວຍແຮງ ບໍ່ໃຊ້ດ້ວຍອຳນາດ ແຕ່ວ່າດ້ວຍພະວິນຍານຂອງເຮົາ” ພະເຢຊູ ສອນພວກລູກສິດໄວ້ວິທີການທີ່ບໍ່ສົມຄວນຈະເຮັດໃນຄຳອຸປະມານີ້ ແຕ່ໃນຄຳອຸປະມາອີກທັງສອງເລື່ອງທີ່ຈະຍົກມາຕໍ່ໄປນີ້ພະອົງສອນວ່າ ອານາຈັກຂອງ ພະເຈົ້າ ຈະແຜ່ຂະຫຍາຍໄປດ້ວຍວິທີໃດ? ຄຳອຸປະມາອີກສອງປະການນັ້ນຄື:

ກ. ຄຳອຸປະມາເລື່ອງ _______________ ໃນ ມັດທາຍ 13: ___ - ___

ຂ. ຄຳອຸປະມາເລື່ອງ _______________ ໃນ ມັດທາຍ 13: ___ (ຕື່ມຄວາມທີ່ຂາດ)

## ເມັດຜັກກາດ ແລະ ເຊື້ອແປ້ງ

**14** ໃຫ້ທ່ານອ່ານ ມທ 13:31-33 ເລື່ອງເມັດຜັກກາດແລະເຊື້ອແປ້ງ. ໃຫ້ທ່ານເລືອກຄຳຕອບທີ່ຖືກຕໍ່ໄປນີ້:

ກ. ເມັດຜັກກາດມີຂະໜາດໃດ?

_______ ໃຫຍ່ຫຼາຍ

_______ ປານກາງ

_______ ນ້ອຍຫຼາຍ

ຂ. ຕົ້ນຜັກກາດໃນເມືອງປາແລັດສະຕິນໃຫຍ່ປານໃດ?

_______ ນ້ອຍຫຼາຍ

_______ ປານກາງ

_______ ໃຫຍ່ຫຼາຍ

ຄ. ຄັນຈະປະສົມເຊື້ອແປ້ງ (ແປ້ງຟູ) ເຂົ້າຈີ່ມັນຈະເປັນຢ່າງໃດ?

_______ ຟູຂຶ້ນ

_______ ແຜ່ອອກໄປທົ່ວຕ່ອນນັ້ນ

_______ ເໜົ່າແລ້ວ.

**15** ຄຳອຸປະມາທັງສອງປະການນີ້ ສອນເລື່ອງດຽວກັນຄືເລື່ອງຫຍັງ? (ເລືອກ)

ກ. ອານາຄົດຂອງອານາຈັກສະຫວັນ.

ຂ. ການຂະຫຍາຍໄປຂອງອານາຈັກສະຫວັນ.

ຄ. ຄວາມສະຫງົບສຸກໃນອານາຈັກສະຫວັນ.

**16** ໃນຄຳອຸປະມາກ່ຽວກັບເມັດຜັກກາດສະແດງວ່າການເລີ່ມຕົ້ນຂອງອານາຈັກນ້ອຍຫຼາຍ ແຕ່ເມັດພືດຄືພະຄຳຂອງ ພະ ເຈົ້າຈະແຜ່ຂະ________ ໄປໃນໃຈມະນຸດຈົນກວ່າຈະປຽບທຽບກັບຕົ້ນໄມ້ທີ່ນົກປ່າມາເຮັດຄອນອາໄສຢູ່ ເຊັ່ນດຽວກັນກັບເຊື້ອແປ້ງ (ແປ້ງຟູ) ທີ່ເອົາໃສ່ໄວ້ໃນແປ້ງຂະຫຍາຍໄປຈົນກວ່າມັນຢູ່ຕະຫຼອດທົ່ວໄປໃນແປ້ງ ແລ້ວແປ້ງນັ້ນຟູໄຂ່ຂຶ້ນທັງໝົດ. ອານາຈັກສະຫວັນກໍ່ເໝືອນກັນ ການປ່າວປະກາດເລີ່ມຕົ້ນດ້ວຍພຽງແຕ່ ພະເຢຊູ ແລະ ສາວົກຂອງພະອົງ ແຕ່ວ່າຈະແຜ່ຂະ________ ຂຶ້ນຈົນກວ່າຈະໄດ້ແຜ່ໄປເຖິງທີ່ສຸດແຜ່ນດິນໂລກ. (ຕື່ມຄວາມທີ່ຂາດ)

**17** ໃນບ້ານເກີດເມືອງນອນຂອງພວກເຮົາກໍ່ເໝືອນກັນ ເຖິງມີຫຼາຍຄົນທີ່ບໍ່ຮັບຮູ້ກໍ່ຕາມ ແຕ່ຖ້າວ່າພວກເຮົາປະກາດຢ່າງອົດ ທົນພາກພຽນພະຄຳເລື່ອງອານາຈັກຈະຕ້ອງແຜ່ _________ ໄປ. (ຕື່ມຄວາມທີ່ຂາດ)

**18** ບໍ່ແມ່ນພຽງແຕ່ພະຄຳເລື່ອງອານາຈັກຈະຂະຫຍາຍໄປໃນທົ່ວໂລກຢ່າງດຽວ ແຕ່ພະຄຳນັ້ນຈະມີອຳນາດຂະຫຍາຍຂຶ້ນ ໄປໃນຈິດໃຈບຸກຄົນເຮົາອີກດ້ວຍ. ໃນຄຳອຸປະມາສອງປະການນັ້ນ

ກ. ຄຳອຸປະມາໃດສະແດງເຖິງການຂະຫຍາຍໄປຂ້າງນອກໃນໂລກ? _______________

ຂ. ຄຳອຸປະມາໃດສະແດງເຖິງການຂະຫຍາຍໄປຂ້າງໃນຈິດໃຈ? _________________

**19** ກ. ມີຜູ້ບາງຄົນທີ່ຢາກໃຫ້ອານາຈັກສະຫວັນຕັ້ງໄວ້ບາດດຽວ ແຕ່ຄຳອຸປະມາທັງສອງນີ້ສອນວ່າອານາຈັກຈະຄ່ອຍ __________ ຂຶ້ນ. (ຕື່ມຄວາມ)

ຂ. ໃນ 1 ໂກລິນໂທ 3:6 ແມ່ນໃຜເຮັດໃຫ້ໃຫຍ່ຂຶ້ນ? __________________________

**20** ການຂະຫຍາຍຂອງອານາຈັກບໍ່ໄດ້ມາໂດຍທາງການຂູ່ເຂັນຫຼືການບັງຄັບ. ການນັ້ນເກີດມາຈາກຂ້າງໃນ ເວລາຄົນນັ້ນ ເຫັນແຈ້ງສິ່ງທີ່ບໍ່ເຫັນມາກ່ອນ ໂດຍການຊົງນຳຂອງພະວິນຍານ ຄຳອຸປະມາທັງສອງປະການທີ່ສອນໃຫ້ຮູ້ຄຸນຄ່າຍິ່ງໃຫຍ່ຂອງອານາຈັກສະຫວັນຄືເລື່ອງໃດ?

ກ. ໃນ ມັດທາຍ 13:44 _____________________________________________

ຂ. ໃນ ມັດທາຍ 13:45-46 __________________________________________

ຊັບທີ່ເຊື່ອງໄວ້ ແລະ ໄຂ່ມຸກທີ່ມີຄ່າແພງ

**21** ໃຫ້ທ່ານອ່ານຄຳອຸປະມາທັງສອງນັ້ນ. ຖ້າວ່າເຮົາຢາກໃຫ້ອານາຈັກສະຫວັນຂະຫຍາຍໄປເຮົາຈະປ່າວປະກາດໃຫ້ຄົນ ຮູ້ເລື່ອງຢ່າງໃດ? (ເລືອກ)

ກ. ຖົກຖຽງກັບເຂົາຈົນກວ່າເຂົາຈະຍອມຮັບ.

ຂ. ຄ່ອຍນຳຄົນໄປຈົນກວ່າເຂົາຈະພົບຄວາມຈິງເລື່ອງອານາຈັກສະຫວັນ.

ຄ. ປະເຂົາໄວ້.

**22** ກ. ຄວາມອຸປະມາຍົກຕົວຢ່າງແບບໃດມາ? ________________________________

ຂ. ເພື່ອອະທິບາຍເລື່ອງດ້ານໃດ? ________________________________________

ຄ. ໃນສອງສ່ວນນັ້ນສ່ວນໃດເຂົ້າໃຈງ່າຍກວ່າ? ______________________________

ງ. ສ່ວນໃດອາດຈະຄື "ຊັບທີ່ເຊື່ອງໄວ້" ເພາະບໍ່ເຫັນງ່າຍ? ________________________

**23** ພະເຢຊູ ຊົງອະທິບາຍຄວາມໝາຍໃຫ້ລູກສິດຟັງ ພະອົງສະແດງເລື່ອງທີ່ມີຄ່າກ່ຽວກັບອານາຈັກໃຫ້ເຂົາຮູ້ເທື່ອລະເລັກ ລະນ້ອຍ ຜົນສຸດທ້າຍພະອົງຖາມເຂົາວ່າ:

"ຂໍ້ຄວາມເຫຼົ່ານີ້ພວກທ່ານເຂົ້າໃຈແລ້ວຫຼື?" (ມທ 13:51)

ເຂົາຕອບຢ່າງໃດ? ________________________________________________

**24** ພວກອັກຄະສາວົກຍັງຄົ້ນຫາ "ຊັບທີ່ເຊື່ອງໄວ້" ຫຼືຈະແມ່ນວ່າເຂົ້າພົບແດ່ແລ້ວ? ________

*ໃຫ້ທ່ານຮັບພິຈາລະນາຄຳຖາມສອງປະການຕໍ່ໄປນີ້ ເພື່ອຈະຮ່ວມປຶກສາຫາລືກັນໃນປະຊຸມເທື່ອໜ້າ. ຖ້າວ່າເຮົາຈະບັງຄັບຄົນໃຫ້ຮັບເອົາ ພະເຢຊູ ຜົນສຸດທ້າຍຈະເປັນຢ່າງໃດ? ຄັນເຂົາຮັບຟັງຈຶ່ງຈະຮູ້ເລື່ອງດີງກ່ອນ ແລະ ຕໍ່ໄປເຂົາຕັດສິນໃຈດ້ວຍຄົນເອງວ່າຈະຕິດຕາມພະອົງໄປ ຜົນສຸດທ້າຍ ຈະເປັນຢ່າງໃດ?*

**25** ມີບາງຄົນທີ່ຊອກຫາຄວາມຈິງຈົນກວ່າຈະພົບ ອີກບາງຄົນພົບຄວາມຈິງມາໂດຍບໍ່ຊອກຫາ. ອາຈານ ໂປໂລ ພົບໂດຍ ບໍ່ຊອກຫາກ່ອນ. ໃນຄຳອຸປະມາທັງສອງເລື່ອງ "ຊັບທີ່ເຊື່ອງໄວ້" ແລະ "ໄຂ່ມຸກທີ່ມີຄ່າແພງ"

ກ. ອັນໃດສະແດງຄົນທີ່ພົບດ້ວຍບໍ່ຊອກຫາກ່ອນ? ___________________________

ຂ. ອັນໃດສະແດງຄົນທີ່ຊອກຫາຈົນກວ່າໄດ້ພົບ? ___________________________

**26** ໃນຄຳອຸປະມາຫຼາຍປະການທີ່ເຮົາຮຽນມາໃນບົດນີ້

ກ. ອັນໃດສອນເລື່ອງການຂະຫຍາຍໄປຂອງອານາຈັກຂ້າງໃນຈິດໃຈ? ______________

ຂ. ອັນໃດວ່າດ້ວຍການຂະຫຍາຍໄປເຖິງທົ່ວໂລກ? ___________________________

ຄ. ອັນໃດສອນເລື່ອງຜູ້ທີ່ເຫັນຄຸນຄ່າໃນອານາຈັກໂດຍບໍ່ຊອກຫາກ່ອນ? _____________

ງ. ອັນໃດສອນເລື່ອງຜູ້ທີ່ຊອກຫາຄຸນຄ່າໃນອານາຈັກຈົນໄດ້ພົບ? _________________

ຈ. ອັນໃດສອນວ່າເຮົາບັງຄັບໃຫ້ອານາຈັກຂະຫຍາຍຂຶ້ນບໍ່ໄດ້ແລະຈຶ່ງຮູ້ອີກວ່າ ບໍ່ແມ່ນພາລະຂອງເຮົາທີ່ຈະແຍກພວກ ຂອງມານໄປຕັດສິນ? ___________________________

**27** ຄຳອຸປະມາຕໍ່ໄປນີ້ສອນເລື່ອງພວກຄົນໃດທີ່ອ້າງຕົວວ່າເປັນຄຼິດສະຕຽນ

ກ. ພະເຢຊູ ບອກວ່າ ລາຊະອານາຈັກປຽບເໝືອນສິ່ງໃດທີ່ຖິ້ມລົງໃນທະເລ? __________

ຂ. ຄຳອຸປະມານີ້ມີຫົວເລື່ອງຢ່າງໃດ? ____________________________________

ຄ. ຢູ່ໃນ ມັດທາຍ ບົດທີ 13 ຂໍ້ໃດແດ່? __________________________________

# ເລື່ອງມອງ

**28** ໃຫ້ທ່ານອ່ານຄຳອຸປະມາເລື່ອງມອງ. ມອງນັ້ນປຽບທຽບຄືຫຍັງ? (ເລືອກ)

______ ໂລກ. ______ ອິສະລາເອນ.

______ ອານາຈັກສະຫວັນ. ______ ຄອບຄົວ.

**29** ດັ່ງນັ້ນສ່ວນໃນອານາຈັກສະຫວັນທີ່ເຮົາເຫັນກັບຕາໃນທຸກມື້ນີ້ຈະປະກອບດ້ວຍຄົນຢ່າງໃດ? (ເລືອກ)

ກ. ແຕ່ຄົນຊອບທຳທັງໝົດ. ຂ. ແຕ່ຄົນຊົ່ວທັງໝົດ.

ຄ. ທັງຄົນຊອບທຳແລະຄົນຊົ່ວປົນກັນ. ງ. ບໍ່ມີຈັກຢ່າງ.

**30** ຄຳອຸປະມາເລື່ອງເຂົ້ານົກປົນເຂົ້າດີວ່າດ້ວຍການແຍກພົນລະເມືອງແຫ່ງລາຊະອານາຈັກຈາກພົນລະເມືອງຂອງມານ ຮ້າຍເປັນເລື່ອງການຂະຫຍາຍອານາຈັກໃນທົ່ວໂລກ. ຄຳອຸປະມາເລື່ອງມອງຄ້າຍຄືກັນ ຕ່າງແຕ່ພວກໃນເລື່ອງມອງນັ້ນເປັນຄົນທີ່ຮ່ວມໃນຄຣິດສະຕະຈັກທັງໝົດ. ໃນເລື່ອງຂອງເຂົ້ານົກແລະເຂົ້າດີວ່າດ້ວຍຄົນທີ່ບໍ່ເປັນຄຣິດສະຕຽນທີ່ຈະແຍກອອກຈາກຄົນທີ່ເປັນຄຣິດສະຕຽນ ແຕ່ໃນເລື່ອງມອງນີ້ວ່າດ້ວຍຄົນທີ່ເປັນຄຣິດສະຕຽນຈິງໃຈ ທີ່ແຍກອອກຈາກຄຣິດສະຕຽນປອມທີ່ບໍ່ຈິງໃຈພາຍໃນຄຣິດສະຕະຈັກ.

ໃນຄຳອຸປະມານີ້ ເທວະດາຈະມາແຍກເອົາຄົນຊົ່ວຈາກຄົນສິນທຳໃນຄາວໃດ? __________

**31** ການແກ້ບັນຫາຄົນຊົ່ວໃນໂລກ ບໍ່ຍາກປານການແກ້ບັນຫາຄົນຊົ່ວໃນຄຣິດສະຕະຈັກ. ພາຍໃນພວກອັກຄະສາວົກຍັງມີຄົນໜຶ່ງຄື: ຢູດາອິສະກາລີອົດ. ເຊັ່ນດຽວກັນໃນຄຣິດສະຕະຈັກສະໄໝນີ້ອາດຈະມີຜູ້ທີ່ບໍ່ເປັນຄຣິດສະຕຽນແທ້ຈິງກໍ່ມີ.

ກ. ຄຳອຸປະມາເລື່ອງເຂົ້ານົກແລະເຂົ້າດີສອນວ່າເຮົາແຍກຄົນຊົ່ວອອກຈາກຄົນສິນທຳບໍ່ໄດ້ໃນບ່ອນໃດ? ____________________________________________

ຂ. ເລື່ອງມອງສອນວ່າເຮົາຈະແຍກຄົນຊົ່ວໃຫ້ອອກຈາກບ່ອນໃດບໍ່ໄດ້ໝົດ? ___________

ຄ. ຄົນຊົ່ວຈະຖືກຫຼົກອອກຈາກໂລກແລະຈາກຄຣິດສະຕະຈັກໄດ້ແຕ່ສະເພາະໃນຄາວໃດ?

____________________________________________

ງ. ໂດຍໃຜຈະເປັນຜູ້ແຍກໄວ້? ____________________________________________

**32** ພະເຢຊູ ສອນວ່າຈະບໍ່ມີຄຣິດສະຕະຈັກໃດໃນໂລກນີ້ຈັກເທື່ອທີ່ບໍ່ມີຜູ້ປອມ ບໍ່ມີຜູ້ໃດທີ່ເຫັນຮູ້ຈິດໃຈຂອງຄົນ ມີແຕ່ ພະ ເຈົ້າອົງດຽວທີ່ຮູ້ໝົດ ມີແຕ່ພວກເທວະດາຈະແຍກຄົນແຕ່ລະຈຳພວກອອກຈາກກັນແລະມີແຕ່ ພະເຈົ້າ ຈະຕັດສິນເຂົາ. ຄຳທີ່ ພະເຢຊູ ກ່າວວ່າ “ປະໃຫ້ເຂົ້າທັງສອງໃຫຍ່ຂຶ້ນດ້ວຍກັນຈົນເຖິງລະດູເກັບກ່ຽວ” ພະອົງເຕືອນຄົນທັງສອງຝ່າຍ

ກ. ພະອົງບອກຄົນບໍ່ອົດທົນທີ່ຢາກບັງຄັບໃຫ້ເອົາຄວາມຊົ່ວອອກຈາກໂລກໂດຍທາງຄຳອຸປະມາໃດ? ____________________________________________

ຂ. ຕໍ່ຄົນທີ່ຢາກຊຳລະໃຫ້ຄວາມຊົ່ວອອກຈາກຄຣິດສະຕະຈັກໝົດດ້ວຍຄຳອຸປະມາໃດ? _____

**33** ຄຳອຸປະມາເລື່ອງມອງເປັນທີ່ສອນສິ່ງທີ່ບໍ່ສົມຄວນທີ່ຈະເຮັດໃນຊີວິດສະຕະຈັກ ຄຳອຸປະມາສຸດທ້າຍໃນ ມັດທາຍ ບົດ 13 ນີ້ ສອນສິ່ງທີ່ເຮົາຄວນເຮັດ

ກ. ຄຳອຸປະມານັ້ນມີຫົວເລື່ອງຊື່ຫຍັງ? ______________________________

ຂ. ຢູ່ໃນ ມັດທາຍ ບົດ 13 ຂໍ້ໃດແດ່? ______________________________

## ເລື່ອງຂອງໃໝ່ແລະຂອງເກົ່າ

**34** ໃຫ້ທ່ານອ່ານຄຳອຸປະມານັ້ນ. ນັກທຳທີ່ຕິດຕາມພະອົງມາປຽບຄືເຈົ້າເຮືອນ (ພໍ່ເຮືອນ) ເຈົ້າເຮືອນເອົາຂອງອອກມາ ຈາກສາງ 2 ຢ່າງໃດ? ______________ແລະ ___________

**35** ຂອງເກົ່າອ້າງເຖິງສິ່ງທີ່ຄຸ້ນເຄີຍແລະເຂົ້າໃຈງ່າຍ ສິ່ງໃໝ່ໝາຍເຖິງສິ່ງທີ່ບໍ່ລື້ງແລະອາດຈະເຂົ້າໃຈຍາກແດ່. ເພື່ອຈະຕີຄວາມໝາຍໃນຄຳອຸປະມານີ້ຢ່າງສະດວກເຮົາຈະຍົກຕົວຢ່າງຈາກນັກເທດ 4 ຄົນເພື່ອສັງເກດວິທີການເທສະໜາຂອງເຂົາ.



ກ. ນັກເທດຜູ້ໜຶ່ງນີ້ເທດສະໜາທຸກເທື່ອເລື່ອງແຕ່ຄວາມເຊື່ອໃນ ພະເຍຊູເພິ່ນ ບໍ່ເທດເລື່ອງອື່ນຈັກເທື່ອ.



ຄ. ອີກຄົນໜຶ່ງເທດແຕ່ເລື່ອງ ບ້ານເມືອງເລື່ອງສັງຄົມວິທະຍາແລະຈິດຕະວິທະຍາບໍ່ຍົກເລື່ອງຈາກພະຄຳພີຈັກເທື່ອ.



ຂ. ນັກເທດອີກຄົນນີ້ມັກເທດແຕ່ເລື່ອງຫຼັກຄວາມເຊື່ອແປກປະຫຼາດ ເຊິ່ງນ້ອຍຄົນຮູ້ເລື່ອງ. ເພິ່ນ ບໍ່ແກ້ໄຂທັງບໍ່ເອົາມາປຽບທຽບກັບຊີວິດປະຈຳວັນ.



ງ. ນັກເທດຄົນສຸດທ້າຍນີ້ຍົກເລື່ອງທີ່ຜູ້ຟັງລື້ງຢູ່ແລ້ວແຕ່ຍັງຍົກຕົວຢ່າງໃໝ່ ແລະສອນເຂົາເລື່ອງວິທີ ນຳມາໃຊ້ໃນຊີວິດປະຈຳວັນ.

ໃນນັກເທດ 4 ຄົນນັ້ນ ຄົນໃດສອນ

_____ 1. ເລື່ອງໃໝ່ຢ່າງດຽວ.

_____ 2. ທັງເລື່ອງເກົ່າແລະເລື່ອງໃໝ່.

_____ 3. ແຕ່ເລື່ອງເກົ່າ.

_____ 4. ບໍ່ສອນດ້ານວິນຍານດອກ.

**36** ໃນຄຳເທດສະໜາຂອງທ່ານສົມຄວນຈະເທດສະໜາຢ່າງໃດ? (ເລືອກ)

ກ. ເລື່ອງເກົ່າທີ່ຜູ້ຟັງລື້ງ.

ຂ. ເລື່ອງໃໝ່ທີ່ໜ້ອຍຄົນຮູ້ຢ່າງດຽວ.

ຄ. ທັງເລື່ອງເກົ່າແດ່ ແລະ ເລື່ອງໃໝ່ແດ່.

**37** ນັກເທດຄົນໃດກໍ່ຕາມຈຳເປັນຕ້ອງ <u>ອະທິບາຍ</u> ພະຄຳແລະ <u>ນຳມາໃຊ້</u> ດ້ວຍ.

ກ. ຖ້າວ່າເຮົາເທດສະໜາຍົກເລື່ອງທີ່ຊຳນານແລ້ວເຮົາເອົາຂອງໃດອອກມາ? __________

ຂ. ຄັນຍົກເລື່ອງທີ່ບໍ່ຊຳນານປານໃດຄືເອົາຂອງໃດອອກມາ? ______________________

**38** ກ. ພະເຢຊູ ເທດສະໜາຢ່າງນັ້ນໃນຄຳອຸປະມາ ພະເຢຊູ ຕັ້ງຕົ້ນດ້ວຍສິ່ງໃດ ກ່ອນຈະຍົກເລື່ອງດ້ານວິນຍານ? ____________________________________________________

ຂ. ພະເຢຊູ ຍົກຕົວຢ່າງຈາກຜູ້ຫວ່ານເພາະຄົນໃນແຂວງຄາລີເລລື້ງກັບການປູກຝັງເຂົາຈຶ່ງເຂົ້າໃຈເລື່ອງຫຍັງ? ____________________________________________________

ຄ. ເປັນຫຍັງ ພະເຢຊູ ບໍ່ໄດ້ຍົກຕົວຢ່າງຈາກຄົນຂຸດບໍ່ແຮ່? _________________________

**39** ກ. ຄຳອຸປະມາຄືຍົກ ___________ ຈາກຊີວິດປະຈຳວັນຂອງຜູ້ຟັງເພື່ອຈະສອນເລື່ອງຈິງດ້ານ __________ (ຕື່ມຄວາມ)

ຂ. ທຳມະດາຄຳອຸປະມາສອນຫຼັກສຳຄັນຈັກປະການ? ___________________________

ຄ. ຄຳອຸປະມາທຸກເລື່ອງໃນ ມັດທາຍ ບົດ 13 ສອນເລື່ອງໃດ? _____________________

**40** ຄຳອຸປະມາໃນ ມັດທາຍ ບົດ 13 ນັ້ນ ສອນເລື່ອງອານາຈັກສະຫວັນຈາກຫຼາຍແງ່. ພະອົງໃຊ້ຄຳອຸປະມາໃນຄຳອະທິ ບາຍແລະການນຳມາໃຊ້ດ້ວຍ. ໃຫ້ເຮົາຮຽນຄືນໜ້ອຍໜຶ່ງທີ່ ພະເຢຊູໃຊ້ຄຳອຸປະມາເພື່ອອະທິບາຍເລື່ອງອານາຈັກ ໃນຄຳອຸປະມາຕໍ່ໄປນີ້ ອັນໃດອະທິບາຍເລື່ອງທີ່ວ່າ:

ກ. ຈະມີຄຼິດສະຕຽນປອມລະຫວ່າງຄຼິດສະຕະຈັກ? ____________________________

ຂ. ອານາຈັກຂະຫຍາຍຂຶ້ນໃນຈິດໃຈຜູ້ທີ່ເຊື່ອຢ່າງໃດ? __________________________

ຄ. ພົນລະເມືອງຂອງອານາຈັກສະຫວັນຈະຕ້ອງຢູ່ດ້ວຍກັນກັບພົນລະເມືອງຂອງມານຮ້າຍໃນໂລກນີ້? ________________________________________________________

ງ. ຄຸນຄ່າຂອງອານາຈັກ? ____________________________________________

ຈ. ການແຜ່ຂະຫຍາຍອອກໄປຂອງອານາຈັກໃນໂລກ? __________________________

ສ. ເຮົາຈຶ່ງປ່າວປະກາດກ່ອນຈະມີຄົນມາຮັບເຊື່ອ? ____________________________

ຊ. ຈະມີທັງເລື່ອງເກົ່າແລະເລື່ອງໃໝ່ໃນຄຳເທດສະໜາເລື່ອງອານາຈັກ? _____________

ຍ. ຜູ້ຊອກຫາຄວາມຈິງເລື່ອງອານາຈັກຈະພົບ? _______________________________

ຈົ່ງເປີດໄປໃນຕາຕະລາງເລື່ອງ "ຕົວຢ່າງຂອງອານາຈັກ" ຕໍ່ໄປນີ້

1. ໃນລຸ່ມຫ້ອງ "ຄຳອຸປະມາ" ໃຫ້ທ່ານຂຽນຊື່ຫົວເລື່ອງຂອງຄຳອຸປະມາຫ້ອງລະປະການ.
2. ໃນລຸ່ມຫ້ອງ "ບົດແລະຂໍ້" ໃຫ້ຂຽນບົດແລະຂໍ້ໃຫ້ຖືກຕາມຫົວເລື່ອງ.
3. ໃນລຸ່ມຫ້ອງ "ອະທິບາຍ" ໃຫ້ທ່ານຈົດຈຸດສຳຄັນໃນແຕ່ລະເລື່ອງ.

# ຕົວຢ່າງຂອງອານາຈັກ

| ຄຳອຸປະມາ | ບົດຂໍ້ຄວາມ | ຈຸດສອນນຳຄັນເລື່ອງອານາຈັກ | |
|---|---|---|---|
| | | ອະທິບາຍ | ການມາໃຊ້ |
| 1. | __ ເຖິງ __ | ຈິ່ງຫວ່ານພືດ<br>ຈຶ່ງຈະເກັບກ່ຽວໄດ້<br>ດິນມີສີ່ຢ່າງ | |
| ເປັນຫຍັງຈຶ່ງໃຊ້ຄຳອຸປະມາ | 18 ເຖິງ 23 | ຊີງອະທິບາຍເລື່ອງຜູ້ຫວ່ານ | |
| 2. | __ ເຖິງ __ | | |
| 3. | __ ເຖິງ __ | | |
| 4. | __ ເຖິງ __ | | |
| ເປັນຫຍັງຄຳອຸປະມາ | 36 ເຖິງ 43 | ຊີງອະທິບາຍເລື່ອງເຂົ້ານົກ ແລະ ເຂົ້າດີ | |
| 5. | __ ເຖິງ __ | | |
| 6. | __ ເຖິງ __ | | |
| 7. | __ ເຖິງ __ | | |
| 8. | __ ເຖິງ __ | | |
| | 53 ເຖິງ 58 | ພະອົງກັບໄປນາຊາເລັດ | |

**41** ຍັງເຫຼືອແຕ່ໃນຫ້ອງໃນລຸ່ມຫ້ອງທີ່ວ່າ "ນຳມາໃຊ້" ກ່ອນທີ່ຈະຂຽນຄຳໃນຫ້ອງນັ້ນ ທ່ານອາດຈະຕ້ອງຄຶດດີ ໆ ກ່ອນ ເພາະອາດຈະນຳມາໃຊ້ໄດ້ຫຼາຍທາງ. ຕົວຢ່າງໃນຄຳອຸປະມາເລື່ອງຜູ້ຫວ່ານ ຂໍ້ໃດນຳມາໃຊ້ໄດ້ຖືກກວ່າ? (ເລືອກ)

ກ. ເຮົາບໍ່ຄວນທໍ້ຖອຍໃຈເມື່ອຄົນບໍ່ຮັບຟັງພະຄຳ

ຂ. ເຮົາຈົ່ງລະວັງຕົວຢ່າໃຫ້ຄວາມກັງວົນຫຸ້ມຮັດພະທຳເສຍ ຈຶ່ງບໍ່ເກີດຜົນ.

ຄ. ຜູ້ຫວ່ານບາງຄົນຈະເກັບກ່ຽວຫຼາຍ ບາງຄົນເກັບກ່ຽວໜ້ອຍ.

ງ. ຜູ້ຫວ່ານທຸກຄົນຈະເກັບກ່ຽວຮ້ອຍຕໍ່.

| ໃຫ້ທ່ານຫຍໍ້ຄຳຕອບ 41 ນັ້ນໃສ່ໃນຕາຕະລາງຫ້ອງທີ່ຖືກ. |
|---|

**42** ຕໍ່ໄປເຖິງຄຳອຸປະມາປະການທີ 2 ທ່ານເຫັນດີວ່າຈະນຳຄຳອຸປະມາເລື່ອງເຂົ້ານົກແລະເຂົ້າດີມາໃຊ້ຢ່າງໃດ? ເລືອກ

ກ. ເຮົາຄວນຈະທຳລາຍຄົນໃດທີ່ກົດຂີ່ຂົ່ມເຫັງໝູ່.

ຂ. ບໍ່ແມ່ນພາລະຂອງເຮົາທີ່ຈະຕັດສິນຜູ້ອື່ນ ແຕ່ຈົ່ງລໍຖ້າຈົນກວ່າ ພະເຈົ້າ ຈະພິພາກສາເຂົາ.

ຄ. ພະເຈົ້າ ບໍ່ຫ່ວງກັບການສໍ້ລາດບັງຫຼວງ ເພາະສະນັ້ນເຮົາຈະຕໍ່ສູ້ຄວາມບາບຫຼືບໍ່ ກໍບໍ່ເປັນຫຍັງ.

| ໃຫ້ທ່ານຫຍໍ້ຄຳຕອບ 42 ໃສ່ໃນຕາຕະລາງດ້ວຍ.<br>(ຫຼືທ່ານອາດຈະແຕ່ງຄຳ "ນຳມາໃຊ້" ອື່ນ ໆ ກໍ່ໄດ້) |
|---|

**43** ໃນຄຳເວົ້າ 6 ຂໍ້ຕໍ່ໄປນີ້ ອ້າງເຖິງຄຳອຸປະມາອີກ 6 ເລື່ອງ ໃຫ້ທ່ານອ່ານປະໂຫຍກໃນແຕ່ລະຂໍ້ແລ້ວເລືອກເອົາຄຳ ອຸປະມາທີ່ມີຄວາມໝາຍຖືກກັບປະໂຫຍກນັ້ນຂຽນໃສ່ບ່ອນວ່າງ.

ກ. ເຮົາຈົ່ງຮັບຮູ້ເອົາໄວ້ວ່າເມື່ອ ພະເຢຊູ ກັບມາເທື່ອທີສອງຈະມີບາງຄົນທີ່ຮ່ວມກັບຄຼິດສະຕຽນ ແຕ່ປາກົດວ່າບໍ່ແມ່ນ ຄຼິດສະຕຽນ. ____________________

ຂ. ເຖິງວ່າເຮົາຈະສະລະທຸກສິ່ງທຸກຢ່າງໄວ້ເພື່ອອານາຈັກສະຫວັນກໍ່ຍັງຈະມີຜົນຄຸ້ມຄ່າຢູ່.

____________________

ຄ. ເຮົາຄວນຈະມີຄວາມຈະເລີນກ້າວໜ້າໃນຊີວິດຄຼິດສະຕຽນ. ____________________

ງ. ເຖິງວ່າຄຼິດສະຕຽນເຮົາຈະມີຈຳນວນໜ້ອຍກໍ່ຕາມແຕ່ໃນອານາຄົດຈະຂະຫຍາຍໄປຫຼາຍ.

____________________

ຈ. ສົມຄວນທີ່ຄຼິດສະຕຽນເຮົາຈະອີງອາໄສຄວາມຈິງໃນພະຄຳທີ່ຮູ້ມາກ່ອນແລ້ວຊອກຫາໃຫ້ຮູ້ເລື່ອງໃໝ່ອີກດ້ວຍ. ____________________

ສ. ຖ້າວ່າເຮົາຊອກຫາ ພະເຈົ້າ ດ້ວຍສຸດຈິດສຸດໃຈເຮົາຈະພົບຊີວິດຄຼິດສະຕຽນຢ່າງບໍລິບູນ.

____________________

ຖ້າວ່າທ່ານຕອບ 43 ຢ່າງຖືກຕ້ອງແລ້ວ ໃຫ້ທ່ານຫຍໍ້ຄຳຕອບເຫຼົ່ານັ້ນໄວ້ໃນລຸ່ມຫ້ອງ "ນຳມາໃຊ້"ຢູ່ໃນຕາຕະລາງ.

*ບາດນີ້ທ່ານມີຕາຕະລາງເລື່ອງຕົວຢ່າງຂອງອານາຈັກຄົບຖ້ວນແລ້ວ ທ່ານຈຶ່ງຈະໃຊ້ໄດ້ໃນໂອກາດໃດທີ່ຈະສອນເລື່ອງ ຄຳອຸປະມາເຫຼົ່ານັ້ນ.*

*ຈົ່ງຕອບບົດເສັງເລີຍໂລດ!*

**ຄຳຕອບ:**

**1** *ກ. ເຂົ້ານົກ ແລະ ເຂົ້າດີ. ຂ. ຂໍ້ 24-30*

**2** *ກ. ບຸດມະນຸດ. ຂ. ແຜ່ນດິນໂລກ ຄ. ພົນລະເມືອງແຫ່ງລາຊະອານາຈັກ.*
*ງ. ພົນລະເມືອງຂອງມານຮ້າຍ. ຈ. ພະຍາມານ. ສ. ຄາວສຸດໂລກ.*
*ຊ. ພວກເທວະດາ.*

**3** *ກ. ພະຄຳ ຂ. ພົນລະເມືອງແຫ່ງລາຊະອານາຈັກ ຄ. ບຸດມະນຸດ*
*ງ. ພະເຢຊູຄຼິດ ຈ. ມານຮ້າຍ*

**4** *ຄ. ຖືກ*

**5** *ລະດູເກັບກ່ຽວ (ເຂົ້າສຸກ)*

**6** *ກ. ຂອງມານຮ້າຍ. ຂ. ເຂົ້ານົກ. ຄ. ພະຍາມານ. ງ. ຜູ້ທີ່ເຊື່ອ.*
*ຈ. ເປັນພົນລະເມືອງແຫ່ງອານາຈັກ. ສ. ພະເຢຊູຄຼິດ.*

**7** *ຢາກຫຼົກເຂົ້ານົກເສຍ*

**8** *ກ. ແລະ ຄ. ຖືກ*

**9** *"ຢ່າສູ່ຟ້າວໄປ ເພາະເມື່ອພວກເຈົາຫຼົກເຂົ້າ ນົກນັ້ນ ຢ້ານຈະຫຼົກເຂົ້າດີດ້ວຍ"*

**10** *ກ. ເຜົາໄຟ. ຂ. ຈະຮຸ່ງເຮືອງໃນລາຊະແຜ່ນດິນ (ໂຮມໄວ້ໃນເລົ້າກໍ່ໄດ້)*

**11** *ກ. ພົນລະເມືອງຂອງມານຮ້າຍ. (ຜູ້ບໍ່ເຊື່ອ) ຂ. ມານຮ້າຍ.*
*ຄ. ວັນສຸດທ້າຍ. (ວັນຕັດສິນພິພາກສາ)*

**12** *ຢູ່ພູສູງ.*

**13** *ກ. ເມັດຜັກກາດ... ຂໍ້ 31-32 ຂ. ເຊື້ອແປ້ງ... ຂໍ້ 33*

**14** *ກ. ນ້ອຍຫຼາຍ. ຂ. ໃຫຍ່ຫຼາຍ. ຄ. ແຜ່ອອກໄປທົ່ວ.*

**15** *ຂ. ຖືກ*

**16** *ຫຍາຍ...ຫຍາຍ*

**17** *ຂະຫຍາຍ.*

**18** *ກ. ເມັດຜັກກາດ. ຂ. ເຊື້ອແປ້ງ.*

**19** *ກ. ຂະຫຍາຍ. ຂ. ພະເຈົ້າ*

**ຄຳຕອບ (ຕໍ່):**

**20** *ກ. ຊັບທີ່ເຊື່ອງໄວ້. ຂ. ໄຂ່ມຸກທີ່ມີຄ່າແພງ.*

**21** *ຂ. ຖືກ*

**22** *ກ. ຈາກຊີວິດປະຈຳວັນ. ຂ. ດ້ານຈິດວິນຍານ ຄ. ຕົວຢ່າງຈາກຊີວິດປະຈຳວັນ*
*ງ. ສ່ວນດ້ານຈິດວິນຍານ.*

**23** *ໂດຍ! ເຂົາໃຈແລ້ວ.*

**24** *ເຂົາພົບແດ່ແລ້ວ.*

**25** *ກ. ຊັບທີ່ເຊື່ອງໄວ້. ຂ. ໄຂ່ມຸກທີ່ມີຄ່າແພງ.*

**26** *ກ. ເຊື້ອແປ້ງ. ຂ. ເມັດຜັກກາດ. ຄ. ຊັບທີ່ເຊື່ອງໄວ້. ງ. ໄຂ່ມຸກທີ່ມີຄ່າແພງ.*
*ຈ. ເຂົານົກປົນເຂົາດີ.*

**27** *ກ. ມອງ ຂ. ເລື່ອງມອງ ຄ. ຂໍ້ 47-50*

**28** *ອານາຈັກສະຫວັນ*

**29** *ຄ. ຖືກ*

**30** *ຄາວສຸດໂລກ.*

**31** *ກ. ໂລກ. ຂ. ລູດສະຕະຈັກ. ຄ. ຄາວສຸດໂລກ ງ. ເທວະດາ.*

**32** *ກ. ເຂົານົກ ແລະ ເຂົາດີ ຂ. ເລື່ອງມອງ*

**33** *ກ. ເລື່ອງຂອງໃໝ່ແລະຂອງເກົ່າ. ຂ. ມທ 13:51-52*

**34** *ຂອງໃໝ່ ແລະ ຂອງເກົ່າ.*

**35** *1. ຖືກກັບ ຂ. 2. ຖືກກັບ ງ. 3. ຖືກກັບ ກ. 4. ຖືກກັບ ຄ.*

**36** *ຄ. ຖືກ*

**37** *ກ. ຂອງເກົ່າ ຂ. ຂອງໃໝ່*

**38** *ກ. ຕົວຢ່າງຈາກຊີວິດປະຈຳວັນ. ຂ. ເລື່ອງຜູ້ຫວ່ານ.*
*ຄ. ເພາະຄົນຄາລີເລບໍ່ລຶ້ງກັບອາຊີບນັ້ນ.*

**39** *ກ. ຕົວຢ່າງ...ວິນຍານ ຂ. ໜຶ່ງປະການ. ຄ. ອານາຈັກສະຫວັນ.*

**40** *ກ. ເລື່ອງມອງ. ຂ. ເລື່ອງເຊື້ອແປ້ງ ຄ. ເຂົານົກແລະເຂົາດີ ງ. ຊັບທີ່ເຊື່ອງໄວ້.*
*ຈ. ເມັດຜັກກາດ ສ. ຜູ້ຫວ່ານ ຊ. ຂອງໃໝ່ແລະຂອງເກົ່າ.*
*ຍ. ໄຂ່ມຸກທີ່ມີຄ່າແພງ.*

**41** *ກ. ຂ. ແລະ ຄ. ຖືກ (ເອົາແຕ່ຈະເລືອກ)*

**42** *ຂ. ຖືກ.*

**43** *ກ. ມອງ. ງ. ເມັດຜັກກາດ. ຂ. ຊັບທີ່ເຊື່ອງໄວ້. ຈ. ຂອງໃໝ່ແລະຂອງເກົ່າ*
*ຄ. ເຊື້ອແປ້ງ. ສ. ໄຂ່ມຸກທີ່ມີຄ່າແພງ.*